**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 202 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 08 ກັນຍາ 2023

# ໜັງສືແຈ້ງເຊີນ

ຮຽນ: ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທະນາຄານແຫ່ງ ສປປ ລາວ ທີ່ນັບຖື;

ເລື່ອງ: ແຈ້ງເຊີນເຂົ້າຢ້ຽມຊົມຫ້ອງວາງສະແດງວັດຖຸພັນຂອງ ທຫລ.

- ອີງຕາມພາລະບົດບາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022.
- ອີງຕາມແຜນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 55 ປີ.

ເພື່ອເປັນການທວນຄືນມູນເຊື້ອ ແລະ ສະເຫຼີມສະຫຼອງເນື່ອງໃນໂອກາດວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 55 ປີ ທີ່ຈະໝູນວຽນມາເຖິງນີ້ (07/10/1968 - 07/10/2023)

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາທ່ານ ເພື່ອນຳພາພະນັກງານພາຍໃນກົມກອງຂອງຕົນເຂົ້າຮ່ວມຢ້ຽມຊົມຫ້ອງວາງສະແດງວັດຖຸພັນທາງດ້ານເງິນຕາ ຮູບພາບການເຄື່ອນໄຫວ, ຖິ່ນກຳເນີດຂອງທະນາຄານ ແລະ ອຸປະກອນເຄື່ອງຮັບໃຊ້ຂອງຂະແໜງທະນາຄານ ແຕ່ລະສະໄໝປະຫວັດສາດຈົນເຖິງປະຈຸບັນ. ເຊິ່ງຫ້ອງວາງສະແດງ ທຫລ ຈະເລີ່ມເປີດໃຫ້ເຂົ້າຊົມແຕ່ ວັນທີ **18-28 ກັນຍາ 2023** ໃນໂມງລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອເຂົ້າຮ່ວມຢ້ຽມຊົມ ຕາມວັນ ແລະ ເວລາດັ່ງກ່າວດ້ວຍ.

ເຊັນແທນ ຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ສຸກັນ ຈັນທະວົງ

ຕິດຕໍ່ພົວພັນ: (ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ)

**020 22226735, 020 56668592**